ຂໍ້ມູນຕິດຕໍ່:
Email: syvongsak123@gmail.com ໂທ: +85620 98003648

# Lan Xang Literature

## Lecture 3:
## Thinking Concept of Lao Feudal System (Con.)

ຂໍ້ມູນຕິດຕໍ່:
Email: syvongsak123@gmail.com ໂທ: +85620 98003648

# ບົດສອນ

**ວິຊາ:** ວັນນະຄະດີລ້ານຊ້າງ
**ລະຫັດ:** 0907409
**ບົດທີ 3:** ລະບົບແນວຄິດຂອງລະບອບສັກດີນາລາວ (ຕໍ່) ເວລາ: 90 ນາທີ
**ຜູ້ບັນຍາຍ:** ປທ. ສົມທະເພັຍ ສີວົງສັກ
**ປີ:** 3
**ພາກຮຽນ:** 2
**ສົກຮຽນ:** 2022-2023

| **ຂັ້ນຕອນ 1 - ຜົນຮັບທີ່ຕ້ອງການ (Desired Results)** | |
|---|---|
| **ສ້າງເປົ້າໝາຍ (Goals):**<br>ນັກຮຽນຈະຮູ້:<br>- ການເຊື່ອຖືພຸດທະສາສະໜາ<br>- ສະພາບວັດທະນະທຳ ແລະ ວັນນະຄະດີ | |
| **ຄວາມເຂົ້າໃຈ (Understand):**<br>ນັກຮຽນຈະເຂົ້າໃຈ:<br>- ການເຊື່ອຖືພຸດທະສາສະໜາ<br>- ສະພາບວັດທະນະທຳ ແລະ ວັນນະຄະດີ | **ຄຳຖາມຫຼັກ (Questions):**<br>1) ສາສະໜາພຸດແມ່ນສາສະໜາຂອງໃຜ? ກຳເນີດຂຶ້ນໄດ້ແນວໃດ?<br>2) ເນື້ອໃນຂອງສາສະໜາພຸດມີແນວໃດແດ່?<br>3) ສາສະໜາພຸດເຂົ້າສູ່ສູວັນນະພູມລາວແຕ່ຕອນໃດ? ແມ່ນໃຜເປັນຜູ້ເອົາມາ? |
| **ຄວາມຮູ້ (Knowledge):**<br>- ໃຫ້ນັກຮຽນຮູ້ໄດ້ເຖິງທີ່ຫຼັກພຸດທະສາສະໜາ ແລະການເຊື່ອຖືຢູ່ໃນລາວ, ສະພາບວັນນະຄະດີ ແລະ ວັດທະນະທຳໃນສະໄໝອານາຈັກລາວລ້ານຊ້າງ. | **ທັກສະ (Skills):**<br>- ອະທິບາຍໄດ້ຫຼັກພຸດທະສາສະໜາ ແລະການເຊື່ອຖືຢູ່ໃນລາວ, ສະພາບວັນນະຄະດີ ແລະວັດທະນະທຳໃນສະໄໝອານາຈັກລາວລ້ານຊ້າງ. |
| **ຂັ້ນຕອນ 2 - ຫຼັກຖານປະເມີນ (Evidence)** | |
| **ໜ້າວຽກສິດສອນ (Tasks):**<br>- ສັງເກດການຄົ້ນຄວ້າຂອງນັກສຶກສາ<br>- ສົນທະນາຖາມ-ຕອບ<br>- ແນະນຳການຄົ້ນຄວ້າ.<br>- ໃບວຽກບ້ານ | **ຫຼັກຖານອື່ນໆ (Other Evidence):**<br>- ລາຍງານຜົນການຄົ້ນຄວ້າ<br>- ເນື້ອໃນຄຳຕອບກິດຈະກຳຂອງນັກສຶກສາ<br>- ການສັງຮວມກິດຈະກຳ<br>- ຜົນການກວດວຽກບ້ານ |
| **ຂັ້ນຕອນ 3 ແຜນການຮຽນ-ການສອນ (Teaching and Learning Plan)** | |
| ❖ **ສື່ການສອນມີ:**<br>ປຶ້ມຕຳລາວິຊາວັນນະຄະດີລ້ານຊ້າງ, ປຶ້ມວັນນະຄະດີລ້ານຊ້າງ3, ປຶ້ມວັນນະຄະດີອິນເດຍ, ເວັບໄຊ້ຂໍ້ມູນ, ຄອມພິວເຕີ, ເຄື່ອງສາຍ LCD. | |

❖ **ກິດຈະກຳການຮຽນ**

**ທວນຄືນ ແລະ ລ້ຽວເຂົ້າສູ່ບົດຮຽນ:**

**I. ທວນຄືນບົດຮຽນເກົ່າ**

- ຄູນຳພານັກຮຽນທວນຄືນບົດຮຽນ ໂດຍໃຫ້ນັກຮຽນເວົ້າເຖິງການເຊື່ອຖືໄສຍະສາດຂອງປະຊາຊົນລາວ ແລະ ສາສະໜາພາມ ໂດຍຫຍໍ້.

**II. ຂັ້ນລ້ຽວເຂົ້າສູ່ບົດສອນ:**

**ບົດທີ 2**

**ລະບົບແນວຄິດຂອງລະບອບສັກດີນາລາວ (ຕໍ່)**

**2.3 ການເຊື່ອຖືພຸດທະສາສະໜາ** (30 ນາທີ)

<u>ກິດຈະກຳ 1:</u>

- ຄູຕັ້ງຄຳຖາມໃຫ້ນັກສຶກສາຄົ້ນຄວ້າ, ສະເໜີນັກສຶກສາອ່ານປຶ້ມຕຳລາ
    1) ສາສະໜາພຸດແມ່ນສາສະໜາຂອງໃຜ? ກຳເນີດຂຶ້ນແນວໃດແດ່?
    2) ເນື້ອໃນຂອງສາສະໜາພຸດມີແນວໃດແດ່?
    3) ສາສະໜາພຸດເຂົ້າສູ່ສຸວັນນະພູມລາວແຕ່ຕອນໃດ? ແມ່ນໃຜເປັນຜູ້ເອົາມາ?
- ຄູໃຫ້ນັກສຶກສາຕອບ 1-2 ຄົນ (10 ນາທີ)
- ຄູສະຫຼຸບບົດຮຽນກິດຈະກຳ: (20 ນາທີ)

ສາສະໜາພຸດ ຫຼື ພຸດທະສາສະໜາ ເປັນສາສະໜາອະເທວະນິຍົມ ທີ່ມີອາຍຸຫຼາຍກວ່າ 2.500 ປີ, ມີຜູ້ນັບຖືເປັນອັນດັບ 4 ຂອງໂລກ, ແຕ່ສ່ວນໃຫຍ່ແມ່ນຢູ່ທະວີບອາຊີ. ເປັນສາສະໜາປະຕິເສດການມີພະເປັນເຈົ້າ ຫຼື ພະຜູ້ສ້າງ, ເຊື່ອໃນຄວາມເປັນຢູ່ຂອງມະນຸດ ທຸກຄົນສາມາດພັດທະນາຈິດໃຈໄປສູ່ຄວາມສຸກສົມບູນໄດ້ດ້ວຍຄວາມພຽນຂອງຕົນເອງ. (ພາກວິຊາຄູພາສາລາວ-ວັນນະຄະດີ,2006).

ສາສະໜາພຸດແມ່ນສາສະໜາໜຶ່ງທີ່ກຳເນີດຂຶ້ນໃນສັງຄົມມະນຸດທີ່ມີຊົນຊັ້ນ, ແມ່ນສາສະໜາໜຶ່ງທີ່ແຜ່ຫຼາຍຢູ່ໃນບັນດາປະເທດອາຊີອາຄະເນຄີ: ໃນປະເທດອິນເດຍ, ຂະເໝນ, ມາເລເຊຍ, ອິນໂດເນເຊຍ, ໄທ, ລາວ, ພະມ້າ, ຈີນ, ຫວຽດນາມ ແລະອື່ນໆ...

ລະບົບແນວຄິດຂອງສາສະໜາກໍຄືລະບົບແນວຄິດຂອງສາສະໜາພຸດ ໄດ້ສ່ອງແສງເຖິງການດຳລົງຊີວິດຂອງສັງຄົມໃນການເຊື່ອຖືແບບເຫຼືອເຊື່ອ ແລະ ຈິດຕະນິຍົມ. ສາສະໜາໄດ້ຄົງຕົວຢູ່ໃນໄລຍະປະຫວັດສາດຂອງສັງຄົມມະນຸດເປັນເວລາດົນນານຍາກທີ່ຈະລົບລ້າງການເຊື່ອຖືເຫຼືອເຊື່ອນັ້ນໄດ້. ພວກເຮົາຢາກຮູ້ວ່າ ແມ່ນໃຜເປັນຜູ້ສ້າງສາສະໜາພຸດນັ້ນຂຶ້ນ, ສ້າງຂຶ້ນເວລາໃດ ແລະ ອີງໃສ່ເງື່ອນໄຂໃດຈຶ່ງສ້າງສາສະໜາພຸດນັ້ນຈຶ່ງຂໍສະເໜີດັ່ງຕໍ່ໄປນີ້:

ສິທາດລາຊະກຸມມານ (ສິທາດຖາ) ພະເຈົ້າໂຄດົມ ແມ່ນຜູ້ທີ່ສ້າງສາສະໜານີ້ຂຶ້ນ ສິທາດລາຊະກຸມມານເກີດລະຫວ່າງປີ 557 ກ່ອນສັກກະລາດ, ໃນໄລຍະເວລາທີ່ຂະບວນການຂ້າທາດຢູ່ອິນເດຍມີການຂັດແຍ່ງຢ່າງໜັກ, ໃນສັງຄົມບູຮານອິນເດຍເຕັມໄປດ້ວຍການຂ້າຟັນລັນແທງຢ່າງປ່າເຖື່ອນ, ຝັງຢູ່ໃນການດຳລົງຊີວິດແບບກົດຂີ່ຂູດຮີດ, ຂົ່ມເຫັງເຕັງຢ່າງທໍລະມານຂອງນັກບວດສາສະໜາພາມ, ພວກເຈົ້າຂຸນມູນນາຍໄດ້ເປັນຜູ້ກໍ່ຂຶ້ນ. ເຫດນັ້ນເອງສິທາດລາຊະກຸມມານຈຶ່ງລາຊີວິດເປັນກະສັດຕັດສະຣູ້ຊອກເສັ້ນທາງອອກຊີງພະນວດ (ບວດ) ເພື່ອຊອກຫາທາງແກ້ໄຂ

ຊີວິດການເປັນຢູ່ຂອງມະນຸດ ບວດໄດ້ 13 ພັນສາສຸດທ້າຍພະອົງກໍຕັດສະຣູ້ທາງສາສະໜາຢູ່ໃຕ້ຕົ້ນໂພ. ຈາກນັ້ນ, ພະສິທາດກໍໄດ້ນໍາສາສະໜາຂອງຕົນໄປເຜີຍແຜ່ຕະຫຼອດໄລຍະ 40 ປີ. ສາສະໜາຂອງພະອົງ ແມ່ນສາສະໜາ ພຸດ ແລະ ພະອົງກໍໄດ້ຮັບການເຄົາລົບບູຊາວ່າ: ເປັນພະເຈົ້າ (ພະພຸດທະເຈົ້າ ຫຼື ພະໂຄດົມ) ນັ້ນເອງ. (ລາຍລະອຽດນັກສຶກສາຈະໄດ້ຮຽນຢູ່ໃນວັນນະຄະດີອາຊີ 2).

ເນື້ອໃນຂອງສາສະໜາພຸດ ແມ່ນລະດົມແນວຄິດ ແລະ ການຂະຫຍາຍຕົວທິດສະດີ ແລະ ປັດຊະຍາຂອງພວກເທວະດາ, ຈໍາພວກນີ້ແມ່ນນັກປາດຂອງສາສະໜາພາມກໍາເນີດກ່ອນສາສະໜາພຸດ ພວກເຂົາມີທິດສະດີວາງອອກວ່າ: ມີຫຼັກມູນປະການໜຶ່ງເປັນສິ່ງສູງສຸດຂອງຈັກກະວານເອີ້ນວ່າ: ເບດັກມານາ ນັ້ນແມ່ນວິນຍານຂອງອະລິຍະສັດ (ວິນຍານຂອງສັດທັງປວງ) ແລະ ອັນໃຫຍ່ຂອງຈັກກະວານ ນັ້ນບໍ່ເກີດຂອງສັດ ແລະ ມະນຸດທັງຫຼາຍ, ເປັນບ່ອນກັບຂອງມະນຸດ ແລະສັດທັງຫຼາຍອີກຫຼັງຈາກສັງຂານໄດ້ລ່ວງລັບໄປແລ້ວ, ວິນຍານອັນໃຫຍ່ນັ້ນແມ່ນຢືນຍົງຄົງຕົວຢູ່ຕະຫຼອດການະນານ. ມະນຸດ-ສັດໂລກຈັກກະວານນີ້ແຕ່ລະສິ່ງລ້ວນແລ້ວແຕ່ມີວິນຍານຕ່າງຫາກຂອງໃຜລາວເອີ້ນວ່າ: ວິນຍານນ້ອຍ. ເວລາວິນຍານນ້ອຍພົ້ນຈາກ ຫຼື ແຍກຈາກວິນຍານໃຫຍ່ກໍມີເອກະລັກພໍໄຜພໍລາວ. ດັ່ງນັ້ນ, ການເຄື່ອນໄຫວຂອງມະນຸດແຕ່ລະມື້ແຕ່ລະວັນເຮັດໃຫ້ວິນຍານນ້ອຍແຍກອອກຈາກວິນຍານໃຫຍ່ເລື້ອຍໆໄປ. ພາໃຫ້ມະນຸດມີຄວາມທຸກທໍລະມານໃນການດໍາລົງຊີວິດ, ການເຄື່ອນໄຫວຂອງຄົນເຮົາພາໃຫ້ມີເວນກໍານໍາຈ່ອງກ່ຽວໄປວຽນມາຢູ່ບໍ່ແລ້ວຈັກເທື່ອ, ຊາດນີ້ຕໍ່ຊາດໜ້າເໝືອນກົງວຽນ. ບັນຫານີ້, ຕັ້ງຂຶ້ນມາເພື່ອຫາວິທີແກ້ໄຂເພື່ອໃຫ້ມະນຸດຫຼຸດພົ້ນຈາກເວນກໍານໍາຈ່ອງກ້ຽວໄປວຽນມາ, ເຮັດແນວໃດຈຶ່ງແກ້ໄຂໄດ້? ສິທາດໄດ້ຕອບດ້ວຍລັກສະນະຂອງອະລິຍະສັດທັງ 4 ວ່າ: ຄວາມທໍລະມານ ແມ່ນເງື່ອນໄຂທີ່ພາໃຫ້ມີຄວາມທຸກ, ວິທີແກ້ໄຂພົ້ນອອກຈາກຄວາມທຸກແມ່ນເສັ້ນທາງອອກ “ບວດ” ປະຕິບັດຕາມອະລິຍະສັດທັງສີ່ນັ້ນ ມະນຸດຈະສາມາດພົ້ນຈາກຄວາມທຸກໂສກຫງ່ວມເຫງົາ, ແກ້ໄຂໄດ້ຄວາມໄຝ່ຝັນເວນກໍາຈໍາຈ່ອງກ້ຽວໄປວຽນມາຈິ່ງຖືກດັບມອດ, ໄດ້ຂຶ້ນສູ່ສະຫວັນ, ສະຫວັນແມ່ນບ່ອນຕັດກິເລດ, ບໍ່ມີວິນຍານ, ບໍ່ມີຄວາມຕາຍ ແລະ ການເກີດ.

**ເວົ້າລວມແລ້ວ:** ສາສະໜາພຸດ ແມ່ນຂະຫຍາຍຈາກທິດສະດີຂອງສາສະໜາພາມ, ແຕ່ກ້າວໜ້າກວ່າສາສະໜາພາມ ເພາະສາສະໜາພຸດໄດ້ຕ້ານຄືນຕໍ່ກັບທິດສະດີຂອງສາສະໜາພາມໃນການແບ່ງຊັ້ນ. ໃນສາສະໜາພຸດເຮົາຈະຊອກຄວາມອິດສະຫຼະພາບໃນເວລາອອກບວດ ແລະ ເວລາພົ້ນອອກຈາກສະຫວັນແລ້ວບໍ່ມີການຈໍາແນກສິ່ງໃດທັງໝົດ, ຕ່າງກັບນັກບວດສາສະໜາພາມ, ນັກບວດສາສະໜາພຸດບໍ່ມີການຜູກມັດຮ່າງກາຍຂອງຕົນໃຫ້ທຸກຍາກຂາດເຂີນເກີນກໍານົດ, ເພາະຢາກໃຫ້ຈິດໃຈປອດໃສຮັບເອົາທໍາ ແລະໄປຕາມທໍາໄດ້ຮ່າງກາຍຕ້ອງສະຫວາດສະເຫວີຍ, ແຕກຕ່າງກັບສາສະໜາພາມ, ສາສະໜາພຸດບໍ່ນັບຖືພະຍາອິນ, ພະຍາພົມ ແລະ ເທວະດາ, ສາສະໜາພາມແມ່ນນັບ ຖືພະຍາອິນ, ພະຍາພົມເປັນສິ່ງສູງສຸດ. ໃນຕົວຈິງແລ້ວປະຫວັດສາດອິນເດຍບູຮານ, ສາສະໜາປະຖົມມະລຶກກໍມີສິ່ງດີງາມຂອງມັນ, ສະໄໝຫຼັງພະສິທາດສາສະໜາພຸດໄດ້ແບ່ງອອກເປັນສອງແງ່ຄື: ແງ່ໜຶ່ງຖືຕົນວ່າ: ເປັນພະທໍາຢ່າງແທ້ຈິງ, ມີທິດສະດີບວດຕາມ ແລະ ປະຕິບັດຕາມພະພຸດທະເຈົ້າວາງອອກບໍ່ມີຫຍັງປ່ຽນແປງ, ນັ້ນແມ່ນແງ່ມະຫາ ຍານໄດ້ແຜ່ຂະຫຍາຍຢູ່ອິນເດຍພາກເໜືອ, ເຂົ້າສູ່ປະເທດຈີນ, ຫວຽດນາມ, ເກົາຫຼີ ແລະ ອື່ນໆ... ພາກສ່ວນນີ້ຖືວ່າ ຈະມີການທໍລະມານທາງດ້ານຮ່າງກາຍແຕ່ຍັງຮັກສາພື້ນຖານສາສະນາພຸດແບບປະຖົມມະລຶກຢູ່. ແງ່ທີ່ສອງ ແມ່ນແງ່ຫີນະຍານພາກສ່ວນນີ້ ແມ່ນຂະຫຍາຍທາງດ້ານຈິດຕະນິຍົມຂອງສາສະໜາພຸດ, ມີທິດສະດີ ເອົາຈິດເປັນສິ່ງສູງສຸດ ແລະ

ເປັນສິ່ງຄວບຄຸມຈັກກະວານດ້ວຍການຄົ້ນຄິດ, ສ້າງຕົວບ່ອນສະຫງົບ, ມະນຸດເຮົາອາດຈະຜ່ອນສັ້ນ ຜ່ອນຍາວຕໍ່ຈັກກະວານ ແລະ ໄປເຖິງບ່ອນກາຍເປັນພະພຸດທະເຈົ້າ ເຂົາເຈົ້າໃສ່ໃຈວ່າ: ຈັກກະວານ ແລະ ມະນຸດແມ່ສິ່ງດຽວກັນ ມະນຸດກັບນອກເພດກໍເປັນອັນດຽວກັນ. ສະນັ້ນ, ຕ້ອງເອົາໃຈໃສ່ຖອດຈິດພາວະນາໃນຕົວຂອງຕົນເອງ. ປະການໜຶ່ງອີກຕ້ອງມີທາງຊ່ວຍເຫຼືອມະນຸດ ເພາະການຊ່ວຍເຫຼືອມະນຸດກໍເປັນການຊ່ວຍເຫຼືອຕົນເອງການພາວະນາກໍຕ້ອງພາວະນາໃນຕົວ (ໃນຈິດໃຈ). ເພາະເວລາຄິດປາກົດອອກດ້ວຍຄວາມເມດຕາ, ຄວາມເປັນທຳ ແລະ ອະທຳຂອງເຮົາແລ້ວ, ຝ່າຍນີ້ຍອມເອົາຈິດເປັນເຈົ້າພາບໃຫ້ແກ່ຕົນເອງ. ດັ່ງນັ້ນ, ການອອກບວດກໍເປັນສິ່ງທີ່ຍາກເຂົາເຈົ້າອາດຈະດຳ ເນີນດ້ວຍ 2 ຮູບການຄື: ຮູບການທີ 1 ອອກປ່າພາວະນາໃຫ້ເປັນກຳມະຖານ, ຮູບການທີ 2 ສ້າງຕົນຢູ່ກັບວັດ. ຝ່າຍຫີນະຍານໄດ້ຂະຫຍາຍຕົວຢ່າງກວ້າງຂວາງຢູ່ທາງພາກໃຕ້ອິນເດຍເຂົ້າສູ່ປະເທດສີລັງກາ ແລະ ຂະຫຍາຍອອກສູ່ອາຊີຕາເວັນອອກສຽງໃຕ້ຢ່າງແຂງແຮງຈຸດໜັກແມ່ນປະເທດພະມ້າ, ໄທ, ລາວ ແລະ ຂະແມ, ບັນດາປະເທດທີ່ຍົກມາຂ້າງເທິງແມ່ນໄດ້ຖືສາສະໜາພຸດມາເປັນສາສະໜາປະຈຳຊາດຂອງຕົນເອງມາຕັ້ງແຕ່ດົນແລ້ວ.

(ຄະນະສຶກສາສາດ,2006).

- **ສາສະໜາພຸດເຂົ້າມາສູ່ສຸວັນນະພູມລາວ** (10 ນາທີ)

<u>ກິດຈະກຳ 2:</u>

- ຄູຕັ້ງຄຳຖາມໃຫ້ນັກສຶກສາຄົ້ນຄວ້າ:
  1) ສາສະໜາພຸດເຂົ້າສູ່ສຸວັນນະພູມລາວແຕ່ຕອນໃດ? ແມ່ນໃຜເປັນຜູ້ເອົາມາ?
- ຄູໃຫ້ນັກສຶກສາຕອບ 1-2 ຄົນ (5 ນາທີ)
- ຄູນັກສຶກສາສະຫຼຸບຮ່ວມກັນ: (5 ນາທີ)

ສາສະໜາພາມເຂົ້າມາສູ່ສຸວັນນະພູມລາວດົນນານສົມຄວນ, ນັບແຕ່ມື້ສາສະໜາພາມເຂົ້າມາສູ່ສຸວັນນະພູມລາວແລ້ວພວກເຂົາໄດ້ເຜີຍແຜ່ອິດທິພົນຂອງຕົນອອກຢ່າງກວ້າງຂວາງ, ສືບທອດເອົາການເຊື່ອຖືໄສຍະສາດຂອງປະຊາຊົນລາວມາເປັນພື້ນຖານ, ຂະຫຍາຍທິດສະດີສາສະໜາຂອງພວກເຂົາເຊັ່ນ: ການເຊື່ອຜີ-ຟ້າ ຫຼືແຖນ, ການເຊື່ອຖືເທວະບຸເທວະດາ, ພະຍາອິນພະຍາພົມ ແລະ ອື່ນໆ... ສາສະໜາພາມແມ່ນສາສະໜາຈິດຕະນິຍົມ ເຂົາໃຫ້ຄຳເຫັນວ່າ ການສ້າງມະນຸດ ແລະຈັກກະວານແມ່ນກຳລັງອັນໜຶ່ງຂອງຜີສາງ ແລະ ເທວະບຸດເທວະດາ, ພະຍາອິນພະຍາພົມສ້າງຂຶ້ນດ້ວຍພິດສະດານ ແລະ ເວດມົນຄາຖາຕ່າງໆ... ດັ່ງນັ້ນ, ເມື່ອສາສະໜາພຸດກຳເນີດກໍອາດສືບທອດບາງຈຸດບາງຢ່າງຈາກທິດສະດີຂອງສາສະໜາພາມ ເພື່ອເປັນພື້ນຖານຂະຫຍາຍສາສາະໜາພຸດກໍເປັນໄດ້, ເພາະວ່າກ່ອນພະສິທັດຖະອອກມາ, ສາສະໜາພາມກໍຂະຫຍາຍຕົວພໍແຮງແລ້ວຢູ່ໃນອິນເດຍ. ດ້ວຍເຫດນັ້ນພະອົງຈຶ່ງຮັບຮູ້ເຖິງທິດສະດີຂອງສາສະໜາພາມ, ທິດສະດີດັ່ງກ່າວໄດ້ສິ່ງຜົນສະທ້ອນບໍ່ຫຼາຍກໍໜ້ອຍຕໍ່ກັບການຂະຫຍາຍສາສະໜາພຸດຂອງຕົນ.

ສາສະໜາພຸດເຂົ້າສູ່ສຸວັນນະພູມລາວຫຼັງສາສະໜາພາມ ແລະ ເຂົ້າມາເປັນເວລາດົນນານແລ້ວຕາມພົງສາວະດານແຫ່ງຊາດລາວໄດ້ເວົ້າໄວ້ວ່າ: ລາວນັບຖືສາສະໜາພຸດ (ພຸດທະສາສະໜາ) ແລ້ວແຕ່ປາງຍັງຢູ່ດິນແດນຈີນ, ສະໄໝພະເຈົ້າລີເມົາ (ສະຕະວັດທີ I ປີ ພ.ສ 612 - ຄ.ສ 69) ຜູ້ຄອງແດວ້ນໜອງແສ, ສາສະໜາພຸດຝ່າຍ

ມະຫາຍານພະເຈົ້າເມັງເຕ, ຊາດລາວໄດ້ເຄື່ອນຍ້າຍລົງມາຕາມຝັ່ງແມ່ນ້ຳຂອງ, ພະພຸດທະສາສະໜາກໍໄດ້ຟື້ນຟູປັວແປງເປັນລຳດັບ ແລະ ກາຍເປັນສາສະໜາຫຼວງຂອງຊາດ.

ໃນສະໄໝເຈົ້າຟ້າງຸ່ມສັດຕະວັດທີ XVI ຄ.ສ 1353-1374 ກໍເອົາສາສະໜາພຸດເຂົ້າມາສູ່ສຸວັນນະພູມລາວອີກເທື່ອໜຶ່ງພະອົງໄດ້ອັນເຊີນເອົາພະພຸດທະຮູບ, ພະບາງ, ພະທຳ ແລະ ພະສັງຄະເຈົ້າ ພ້ອມດ້ວຍມະຫາປາສະມັນ ແລະ ນັກປາດສາສະໜາບັນດິດຈາກຂະແມມາເປັນຕົ້ນແບບໃນປີ ພ.ສ 1902-ຄ.ສ 1359 ບັນຫານີ້ເອກະສານຈາກອິນເດຍໄດ້ກ່າວໄວ້. ດັ່ງນັ້ນຈະເປັນການຊັດເຈນ ຫຼື ບໍ່? ແຕ່ພວກເຮົາຮັບຮູ້ນຳກັນ ແລ້ວວ່ານັບແຕ່ພະເຈົ້າຟ້າງຸ່ມຂຶ້ນຄອງລາຊະສົມບັດປະເທດລ້ານຊ້າງເປັນຕົ້ນມາ ສາສະໜາພຸດໄດ້ແຜ່ຂະຫຍາຍຢ່າງກວ້າງຂວາງ.

ກ້າວສູ່ສັດຕະວັດທີ XVI-XVII ສາສະໜາພຸດໄດ້ແຜ່ຂະຫຍາຍຢ່າງກວ້າງຂວາງກວ່າໝູ່ໃນປະເທດລາວ, ໃນໄລຍະນີ້ວັດວາຮາມກໍໄດ້ກໍຕັ້ງຂຶ້ນຢູ່ຫຼາຍແຫ່ງເພື່ອເປັນບ່ອນທຳບຸນໃຫ້ທານ, ວັດວາອາຮາມສ່ວນຫຼາຍລ້ວນແຕ່ເປັນໃຈກາງວັດທະນະທຳ ແລະ ກາຍເປັນບ່ອນເມຕາຈິດຂອງປວງຊົນລາວທັງຊາດ, ເປັນບ່ອນປຸກລະດົມຈິດໃຈຂອງປະຊາຊົນໃນຍາມໂສກເສົ້າໂສກາ.

ສາສະໜາພຸດເປັນສາສະໜາປະຈຳຊາດຂອງລາວເຮົາແຕ່ດົນນານແລ້ວ ສະນັ້ນ, ພະພຸດທະສາສະໜາຈຶ່ງໄດ້ຝັ່ງເລິກເຂົ້າໃນຈິດໃຈ ແລະ ມັນສະໝອງຂອງຄົນລາວມາແຕ່ດົນນານປະຊາຊົນລາວໄດ້ຖືເອົາພຸດທະສາສະໜາເປັນບ່ອນເພິ່ງພາອາໄສຂອງຕົນເພື່ອແກ້ໄຂບັນຫາທີ່ເກີດຂຶ້ນຢູ່ໃນຊີວິດຂອງຕົນ, ວັດວາອາຮາມໄດ້ກາຍເປັນໂຮງຮຽນໂຮງໝໍຂອງປະຊາຊົນລາວມາແຕ່ບູຮານນະການ. ສະນັ້ນ, ປະຊາຊົນລາວຈຶ່ງເຄົາລົບວັດວາອາຮາມເປັນບ່ອນສັກສິດແຫ່ງໜຶ່ງ. ສາສະໜາພຸດຍັງເປັນບ່ອນສັ່ງສອນຄົນເຮົາໃຫ້ຢູ່ຕາມສິນກິນຕາມທຳ, ບໍ່ຂ້າສັດຕັດຊີວິດ, ໃຫ້ຖືສິນພາວະນາຢູ່ບໍ່ຂາດ, ຄຳສອນດັ່ງກ່າວໄດ້ສົ່ງຜົນສະທ້ອນຢ່າງຫຼວງຫຼາຍຕໍ່ປະຊາຊົນລາວທັງຊາດ, ປະຊາຊົນລາວຈຶ່ງເປັນຄົນຊື່ສັດສຸດຈະລິດ, ບໍ່ໂລບມາກໂລພາ, ບໍ່ຂ້າເຈົ້າເອົາຂອງຕາມຫຼັກສິນຫ້າຂອງສາສະໜາພຸດ, ຄຳສອນດັ່ງກ່າວຂອງສາສະໜາພຸດ ແມ່ນມີປະໂຫຍດອັນດີເປັນບົດຮຽນອັນລ້ຳຄ່າໃຫ້ແກ່ປະຊາຊົນລາວໃນການດຳລົງຊີວິດປະຈຳວັນອີກດ້ວຍ. ຕໍ່ມາຄຳສັ່ງສອນດັ່ງກ່າວກໍຖືກຊົນຊັ້ນສັກດີນາໝູນໃຊ້ເພື່ອເປັນເຄື່ອງມືທາງດ້ານການປົກຄອງ, ຄຳສອນຂອງສາສະໜາໃນບາງຄຳກໍບໍ່ເໝາະສົມປານໃດເຊັ່ນ: ການຂ້າສັດຕັດຊີວິດຖ້າວ່າມີການຂ້າສັດຕັດຊີວິດມັນຈະມີບາບໄລ່ເວນທັນ, ບັນຫານີ້ຝ່າຍສາສະໜາຝ່າຍສາສະໜາສັ່ງສອນໃຫ້ຄົນເຮົາຕ້ອງຍອມຈຳນົນຕໍ່ການກົດຂີ່ຂູດຮີດຂອງຊົນຊັ້ນປົກຄອງ, ອີກດ້ານໜຶ່ງກໍເປັນການຈຳນົນຕໍ່ການຮຸກຮານຂອງພວກຈັກກະພັດບໍ່ກ້າຕ້ານຄືນ, ເພາະຖ້າມີການຕ້ານຄືນກໍຍ້ານເປັນການຜິດຕໍ່ຄຳສັ່ງສອນຂອງພະພຸດທະເຈົ້າ, ແລ້ວຈະມີບາບໄລ່ເວນທັນ ຫຼື ບໍ່ປະຕິບັດຕາມຄຳສັ່ງສອນຂອງພະພຸດທະເຈົ້າ, ເວລາຕາຍໄປຈະຖືກຕົກນາຮົກອະເວຈີຢ່າງບໍ່ຕ້ອງສົງໄສນັ້ນແມ່ນຈຸດຄົງຄ້າງຂອງທິດສະດີສາສະໜາພຸດ. ແຕ່ເຖິງຢ່າງໃດກໍຕາມພະພຸດທະສາສະໜາຢູ່ລາວຂອງພວກເຮົາກໍຍັງມີຜົນປະໂຫຍດຢ່າງຫຼວງຫຼາຍ ເປັນພື້ນຖານວັດທະນະທຳສັງຄົມຂອງລາວຕັ້ງແຕ່ໃດມາ.

**ອາດສະຫຼຸບໄດ້ວ່າ**: ສາສະໜາພຸດແມ່ນລະບົບຄວາມຄິດຕົ້ນຕໍຂອງລະບອບສັກດີນາລາວ ແລະ ປະຊາຊົນລາວ, ສາສະໜາພຸດຂອງສິທາດເຊື່ອຖືເອົາຄວາມເປັນເອກະພາບຂອງຈັກກະວານ, ສິທາດໄດ້ວາງທິດສະດີຂອງຕົນວ່າ: ຕ້ອງຖືທຳ ແລະ ພາວະນາ ເພື່ອກັບເມື່ອສູ່ສະຫວັນ, ເອົາຕົນອອກຈາກຄວາມທຸກຍາກລຳບາກໃນການດຳລົງ

ຊີວິດ, ເພື່ອຊອກຫາຄວາມສະໜຸກສະໜານ ແລະ ຄວາມສະຫງົບນັ້ນແມ່ນການຫຼີກເວັ້ນອອກຈາກການຕໍ່ສູ້ຊົນຊັ້ນ ຕ້ອງອົດທົນພະຍາຍາມລໍຖ້າການແກ້ໄຂຢູ່ສະຫວັນແບບໄຝ່ຝັນ. ເຫດການນີ້ຖືກຕາມຄວາມມຸ່ງຫວັງຂອງຊົນຊັ້ນສັກດີນາ, ຊົນຊັ້ນສັກດີນາເຫັນໄດ້ຄວາມຕ້ອງການໄດ້ນໍາໃຊ້ປັດໃຈເຫຼືອເຊື່ອແບບຈິດຕະນິຍົມຂອງສາສະໜາເຂົ້າໃນການປົກຄອງ. ດ້ວຍເຫດນັ້ນພຸດທະສາສະໜາຢູ່ລາວຈຶ່ງຢືນຍົງຄົງຕົວມາເຖິງປັດຈຸບັນ ແລະ ກາຍເປັນສາສະໜາປະຈໍາຊາດຂອງລາວ. ລະບົບແນວຄິດຂອງສາສະໜາພຸດໄດ້ສົ່ງຜົນສະທ້ອນຕໍ່ການປະດິດຄິດແຕ່ງວັນນະຄະດີສິລະປະກໍາຂອງຊາດລາວຢ່າງຫຼວງຫຼາຍ ຈຸດໜັກແມ່ນວັນນະຄະດີຂຽນສະໄໝສັກດີນານັ້ນເອງ (ສົມທະເພີຍ ສີວົງສັກ ແລະ ອໍາໄພ ສອນທະລາ, 2019).

**2.4 ສະພາບວັດທະນະທໍາ ແລະ ວັນນະຄະດີ** (20 ນາທີ)

- ຄູຕັ້ງຄໍາຖາມສົນທະນາກັບນັກສຶກສາໃນເລື່ອງວັດທະນະທໍາ
- ຄູນັກສຶກສາສະຫຼຸບຮ່ວມກັນ: (20 ນາທີ)

ການທີ່ຈະນາສະເໜີວັນນະຄະດີສະໄໝໜຶ່ງບໍ່ແມ່ນງ່າຍພໍປານໃດເວລາທີ່ບໍ່ທັນມີຜູ້ໃດເອົາໃຈໃສ່ຄົ້ນຄວ້າຕີລາຄາຢ່າງເປັນລະບົບຄັກແນ່. ແຕ່ເຖິງຢ່າງໃດກໍຕາມແຕ່ກໍຍັງມີນັກຄົ້ນຄວ້າໃຫ້ຮູ້ວ່າ ນັບແຕ່ສັດຕະວັດກ່ອນພຸ້ນ, ວັນນະຄະດີລາວແມ່ນໄດ້ຄັດມາຈາກວັນນະຄະດີຂະເໝນທີ່ໃຊ້ອັກສອນເປັນພາສາກາງ ເຊິ່ງໄດ້ລອກແບບມາຈາກວັນນະຄະດີອິນເດຍສະໄໝບູຮານທີ່ແຜ່ຂະຫຍາຍເຂົ້າມາໂດຍນັກປາດອາຈານເຂົ້າມາເຜີຍແຜ່ສາສະໜາພາມ ແລະ ສາສະໜາພຸດ. ໃນສະໄໝນັ້ນໄດ້ສົ່ງຜົນສະທ້ອນເຖິງວັດທະນະທໍາ ແລະ ວັນນະຄະດີຂອງພວກເຮົາບັນດາບົດດັ່ງກ່າວແມ່ນເທດທໍາລໍາສູດທີ່ຂຽນດ້ວຍຕົວອັກສອນ (ໜັງສືບາລີ - ສັນສະກິດ) ທີ່ເພິ່ນຈາລຶກເຖິງທໍາມະວິໄນ, ຄໍາສອນຂອງພະພຸດທະເຈົ້າເຂົ້າມາເຜີຍແຜ່ໃນສຸວັນນະພູມລາວ ຫຼື ແຫຼມທອງ, ເຮັດໃຫ້ວັດທະນະທໍາໂດຍສະເພາະພາສາຄໍາເວົ້າຂອງປະຊາຊົນລາວມີແບບແຜນຫຼັກເກນຂຶ້ນຕື່ມ.

ບັນດາໜັງສືວັນນະຄະດີຕະຫຼອດໄລຍະຫຼາຍສັດຕະວັດສ່ວນຫຼາຍແມ່ນໄດ້ສືບທອດເອົາໂຄງຮ່າງເລື່ອງຂອງບົດວັນນະກໍາອິນເດຍບູຮານມາປະດິດແຕ່ງເລື່ອງແຕ່ມີລັກສະການດັດແປງໃຫ້ຖືກຕາມລັກສະນະຂອງຊາດລາວຕາມເສັ້ນທາງເຜີຍແຜ່ສາສະໜາພາມ ແລະ ສາສະໜາພຸດໃນສຸວັນນະພູມລາວ. ວັນນະຄະດີລາວແມ່ນສືບເນື່ອງມາຈາກສາສະໜາພຸດສ່ວນໃຫຍແມ່ນເລື່ອງທີ່ເວົ້າເຖິງພະພຸດທະເຈົ້າໃຊ້ຊາດນັບແຕ່ເວລານັ້ນເປັນຕົ້ນມາ. ໝາຍຄວາມວ່າ: ຕັ້ງແຕ່ສາສະໜາພຸດໄດ້ຢັ່ງເລິກເຂົ້າໄປໃນຈິດໃຈຂອງປະຊາຊົນລາວແລ້ວ, ວັນນະຄະດີລາວໄດ້ເຕີບໃຫຍ່ຂະຫຍາຍຕົວຢ່າງກວ້າງຂວາງ.

ວັນນະຄະດີລາວບູຮານເຕັມໄປດ້ວຍພາສາຄໍາເວົ້າ, ພື້ນສືບ, ເທບນິຍາຍ, ນິທານຕ່າງໆ ເປັນສິ່ງຈັບອົກຈັບໃຈໃຫ້ແກ່ຜູ້ອ່ານຜູ້ຟັງເຊັ່ນ: ເລື່ອງ ຊາດົກ ທີ່ມີໃນຄໍາພີພະໄຕປິດົກ ຫຼື ບົດເລື່ອງທີ່ນັກປາດລາວສະໄໝບູຮານໄດ້ແຕ່ງໄວ້ຄື: ຄໍາໂອວາດຂອງເຈົ້າຟ້າງຸ່ມ, ທ້າວຮຸ່ງ - ທ້າວເຈືອງ, ຈໍາປາສີ່ຕົ້ນ, ສຸລິວົງ, ກາລະເກດ, ສຽວສະຫວາດ, ທ້າວລົບທອງ, ນາງຕັນໄຕ, ຂຸນລູ ນາງອົ້ວ, ພະເວດສັນດອນ, ກາບປູ່ສອນຫຼານ ຫຼານສອນປູ່, ອິທະຍານສອນລູກ, ຊະນະສັນທະ, ສານລົບພະສູນ, ກາບເມືອງພວນ, ພື້ນວຽງ ແລະ ອື່ນໆ... ນອກຈາກນັ້ນ, ຢູ່ຕາມວັດວາຕ່າງໆຍັງມີປະມວນເລື່ອງ: ສິບຊາດຊາດົກ, 50 ຊາດຊາດົກ, 500 ຊາດຊາດົກ.

ການຂະຫຍາຍບົດບັນທຶກ ຫຼື ໜັງສືເລື່ອງວັນນະຄະດີດັ່ງກ່າວນັ້ນອາດຈະມີມາແຕ່ດົນ, ແຕ່ຮອດສັດຕະວັດທີ XIV-XVII ນີ້ຈຶ່ງມີການຂະຫຍາຍຕົວຢ່າງກວ້າງຂວາງ, ບັນດາໜັງສືເລື່ອງທີ່ມີຊື່ສຽງນັ້ນອາດຈະແຕ່ງຂຶ້ນໃນສະໄໝເຈົ້າສຸລິຍະວົງສາເພາະວ່າ ໃນສະໄໝນັ້ນ, ເປັນສະໄໝທີ່ອານາຈັກລາວລ້ານຊ້າງຈະເລີນຮຸ່ງເຮືອງກວ່າໝູ່ , ແຕ່ເປັນໜ້າເສຍດາຍກ່ຽວກັບໜັງສືເລື່ອງທີ່ມ່ວນອອນຊອນເຫຼົ່ານັ້ນບໍ່ປາກົດມີຊື່ຂອງຜູ້ແຕ່ງ, ໜັງສືເລື່ອງເຫຼົ່ານັ້ນເພິ່ນໄດ້ເກັບມ້ຽນໄວ້ຕາມຫໍສະໝຸດ, ວັດວາຕ່າງໆ ແລະ ຢູ່ຕາມບ້ານເຮືອນຂອງປະຊາຊົນໃນທົ່ວອານາຈັກລາວ.

ນອກຈາກ, ເອກະສານວັນນະຄະດີທີ່ກ່າວມາຂ້າງເທິງນັ້ນແລ້ວຍັງມີເອກະສານທີ່ສຳຄັນອີກປະການໜຶ່ງນັ້ນຄືໝໍຂັບໝໍລຳທີ່ຢາຍກັນຢູ່ຕາມທ້ອງຖິ່ນດິນນາ ເຂົາເຈົ້າເປັນຜູ້ຮັກສາເອກະສານ ແລະ ເຜີຍແຜ່ເອກະສານນີ້ຢ່າງກວ້າງຂວາງ ແລະ ວ່ອງໄວທັນການເຖິງໝູ່ມະຫາຊົນ, ໝໍຂັບໝໍລຳທັງຫຼາຍເຫຼົ່ານັ້ນລ້ວນແຕ່ເປັນສິລະປະວັນນະຄະດີທີ່ດີເດັ່ນຂອງປະຊາຊົນ, ເຂົາເປັນຜູ້ທີ່ໃຊ້ເຫື່ອໃຊ້ແຮງ, ໃຊ້ສະຕິປັນຍາ ຂອງຕົນເພື່ອສະແດງໃຫ້ປະຊາຊົນຊົມດ້ວຍນ້ຳສຽງທີ່ມ່ວນອອນຊອນປະສານກັບສຽງປີ່ສຽງແຄນ ແລະ ສຽງດົນຕີຕ່າງໆ. ດັ່ງນັ້ນ, ໝໍຂັບໝໍລຳລ້ວນແຕ່ແມ່ນນັກວັນນະຄະດີທີ່ແຜ່ຂະຫຍາຍຕົວສົມຄວນໃນລາວຂອງພວກເຮົາ. ເຂົາເຈົ້າໄດ້ສືບທອດກັນມາປີນີ້ຫາປີໜ້າ, ຈາກຊີວິດນີ້ໄປສູ່ຊີວິດໃໝ່, ຈາກຮຸ່ນເກົ່າຕໍ່ຮຸ່ນໃໝ່. ແມ່ນນັກວັນນະຄະດີທີ່ຕິດພັນກັບປະຊາຊົນ, ເປັນຜູ້ກຳແໜ້ນການດຳລົງຊີວິດຂອງປະຊາຊົນ, ບັນດາວັນນະຄະດີທີ່ໝໍຂັບໝໍລຳແຕ່ງຂຶ້ນ ແລະ ເຜີຍແຜ່ນັ້ນແມ່ນວັນນະຄະດີມະຫາຊົນ. ສະນັ້ນ, ເມື່ອຄົ້ນຄວ້າວັນນະຄະດີເຮົາບໍ່ຄວນລືມເອກະສານເຫຼົ່ານີ້ມາຄົ້ນຄວ້າເພາະເອກະສານດັ່ງກ່າວເປັນເອກະສານທີ່ສຳຄັນທີ່ສຸດ.

ຄຽງຄູ່ກັບວັນນະຄະດີປະຊາຊົນນັ້ນວັນນະຄະດີສາສະໜາກໍຍືນຍົງຄົງຕົວ ແລະ ແຜ່ຂະຫຍາຍຫຼາຍຢູ່ໃນສັງຄົມລາວຂອງພວກເຮົາເຊັ່ນ: ເລື່ອງ ພະໄຕປິດົກ (ພະສູດ, ພະທຳ ແລະ ພະວິໄນ) ຫຼື ເລື່ອງຊາດົກອື່ນໆ. ເປັນວັນນະຄະດີສຳຄັນທາງດ້ານສາສະໜາ, ໃນພິທີທຳບຸນຕ່າງໆທາງດ້ານສາສະໜາ ເພິ່ນເຄີຍເອົາເລື່ອງຊາດົກມາເລົ່າສູ່ປະຊາຊົນຟັງ, ນອກນັ້ນ ຍັງມີຮູບແຕ້ມຕ່າງໆຕາມພະເວດ, ຜະໜັງວັດວາອາຮາມກໍເຕັມແຕ່ເລື່ອງຊາດົກ. ໃນສະໄໝເຈົ້າສຸລິຍະວົງສາ ສາສະໜາພຸດໄດ້ຈະເລີນຮຸ່ງເຮືອງ ແລະ ຂະຫຍາຍຕົວຢ່າງກວ້າງຂວາງ ມະຫາກະສັດສຸລິຍະວົງສາໄດ້ສົ່ງເສີມການສຶກສາພະອະລິຍະທຳໃຫ້ຈະເລີນກ້າວໜ້າ ຝ່າຍອານາຈັກຂອມ ພະອົງໄດ້ສົ່ງເສີມໃຫ້ປະຊາຊົນພົນລະເມືອງເຊື່ອຖືສາສະໜາພຸດ ແລະ ປະຊາຊົນລາວໃຕ້ອຳນາດການປົກຄອງຂອງເຈົ້າສຸລິຍະວົງສາ ແມ່ນມີຄວາມຢູ່ເຢັນເປັນສຸກຕະຫຼອດການ.

ເວທີດົນຕີເປັນເຄື່ອງເສບປະຈຳຊາດກໍຂະຫຍາຍຕົວຢ່າງກວ້າງຂວາງເຊັ່ນ: ປີ, ສີຊໍ, ແຊ່ງ, ຊິ່ງ, ລະນາດ, ຄ້ອງວົງ, ກຸ່ຍ, ແຄນ... ເວົ້າໂດຍຫຍໍ້ວ່າ: ເຄື່ອງດົນຕີດີດ, ສີ, ຕີ, ເປົ່າ ປະກອບໃນງານມ່ວນຊື່ນ ແມ່ນຂະຫຍາຍຕົວຄົບຊຸດ. ເຄື່ອງສຽງທຸກຊະນິດນີ້ໄດ້ປະກອບກັບສຽງຂັບ, ສຽງລຳ, ທຳເພງ ປະກອບກັບຈັ່ງຫວະຟ້ອນ, ເຕັ້ນສະແດງລວດລາຍຕ່າງໆ, ບັນດາບົດປະພັນ, ບົດກະວີດ ກາບກອນ, ໂຄງ, ສານ, ໜັງສືນິທານພື້ນເມືອງຕ່າງໆເຫຼົ່ານັ້ນຂະເຈົ້າມັກພັນລະນາເຖິງສະພາບຄວາມເປັນໄປຂອງສັງຄົມເຊັ່ນ: ຄວາມຮັກ, ຄວາມແຄ້ນ, ຄວາມໂສກເສົ້າສະຫຼົດໃຈ, ສິ່ງທີ່ປະສົບກັບອາລົມທີ່ໄດ້ພົບຜ່ານມາ. ສິ່ງທີ່ເຂົາເຈົ້າໄດ້ຍົກຂຶ້ນມາພັນລະນານັ້ນກໍມີຫຼາຍສິ່ງຫຼາຍປະການເຊັ່ນ: ແມ່ນ້ຳລຳເຊ, ຫ້ວຍຮ່ອງຄອງບຶງ, ແສງພະອາທິດ, ແສງຈັນ ແລະ ອື່ນໆ.ຈາກນັ້ນຍັງໄດ້ພັນລະນາເຖິງການປ່ຽນແປງຂອງທຳມະຊາດຄື: ອາກາດຮ້ອນ, ອາກາດໜາວ ຫຼື ວາດພາບເຖິງຕົ້ນໄມ້ໃບຫຍ້າ, ທັດສະນີຍະພາບດັ່ງກ່າວໄດ້ປາກົດອອກ

ຜ່ານປາຍປາກກາຂອງນັກຂຽນຢ່າງສວຍສົດງົດງາມອີກປະການໜຶ່ງເວທີສິລະປະກໍາຂອງພວກເຮົາໄດ້ເກີດຂຶ້ນເປັນຮູບຮ່າງອາດຈະຢູ່ໃນລະຫວ່າງສັດຕະວັດທີ XIV-XVI ເວທີສິລະປະດັ່ງກ່າວ. ໄດ້ປະສົມປະສານກັນຢ່າງ ແໜ້ນໜາກັບສິລະປະວັນນະຄະດີຕ່າງໆມີບາງຄັ້ງງາຄາວໄດ້ປະສົມປະສານກັບນັກຟ້ອນ, ບົດສົນທະນາຖາມຕອບ ຫຼື ລໍາໂຈດລໍາແກ້. ກິລິຍາທ່າທາງສິລະປະປະເພດນີ້ລ້ວນແຕ່ມີຈັ່ງຫວະເໝາະສົມ, ປະສານກັນຢ່າງແໜ້ນແຟ້ນກັບຈັງຫວະດົນຕີ.

ຕັ້ງແຕ່ບູຮານນະການເປັນຕົ້ນມາ, ສິລະປະດົນຕີຂອງຄົນລາວອຸດົມສົມບູນ ແລະ ມີຫຼາຍຮູບແບບທີ່ມ່ອນອອນຊອນ, ດ້ວຍການຈື່ຈໍາ ແລະ ບົດຮຽນຂອງຕົນ. ນັກສິນລະປິນລາວໄດ້ສະແດງລວດລາຍ, ບົດຂັບ, ບົດລໍາທີ່ໄດ້ຮັບຄວາມນິຍົມຊົມຊອບຈາກຜູ້ຟັງເປັນຢ່າງດີ, ທໍານອງຂັບ ແລະ ສຽງດົນຕີຕ່າງໆແມ່ນໄດ້ສືບທອດກັນມາຫຼາຍເຊັ່ນຄົນ, ດ້ວຍເຫດນັ້ນມາເຖິງປັດຈຸບັນນີ້ພວກເຮົາຈຶ່ງສາມາດມີດົນຕີ, ທໍານອງຂັບລໍາເປັນສິ່ງດູດດື່ມຈິດໃຈຜູ້ຟັງຢ່າງບໍ່ເບື່ອໜ່າຍເຊັ່ນ: ຂັບຫຼວງພະບາງ (ຂັບທຸ້ມ), ລໍາຕັ່ງຫວາຍ, ລໍາມະຫາໄຊ, ລໍາພູໄທ, ລໍາຄອນສະຫວັນ, ລໍາສີພັນດອນ, ລໍາສາລະວັນ ແລະ ອື່ນໆ.

ນັບແຕ່ສະໄໝອານາຈັກລາວລ້ານຊ້າງເອກະລາດ ເອກະພາບ ແຕ່ສະໄໝເຈົ້າຟ້າງຸ່ມເຖິງສະໄໝເຈົ້າສຸລິຍະວົງສາ ຂຶ້ນຄອງປະເທດຊາດບ້ານເມືອງ, ບູຮານສະຖານ, ບູຮານວັດຖຸ ແລະ ບູຮານຄະດີຂອງລາວເຮົາກໍໄດ້ສ້າງຂຶ້ນຢ່າງຫຼວງຫຼາຍດ້ວຍສີໄມ້ລາຍມືຈິດພິດສະດານ ແລະ ສວຍສົດງົດງາມມີຢູ່ຫຼາຍບ່ອນເຊັ່ນ: ທາດຫຼວງວຽງຈັນ, ວັດສີສະເກດ, ວັດຫໍພະແກ້ວ, ວັດທາດຫຼວງ, ວັດມະໂນລົມ, ວັດອຸໂບສົດດ ວັດວິຊຸນ, ວັດຊຽງທອງ (ຫຼວງພະບາງ) ວັດພູເຖົ້າເຕົ່າ, ວັດພູເຂົາແກ້ວ, ວັດຈອມທອງ, ວັດສຸທັດ (ຈໍາປາສັກ) ນອກນັ້ນຍັງມີອີກຫຼາຍວັດຢູ່ຕາມເຂດແຄວ້ນຕ່າງໆ.

ກ່ຽວກັບການຄວັດລາຍ ແລະ ປັ້ນຫຼໍ່ພະພຸດທະຮູບທີ່ເຮັດດ້ວຍຫີນ, ທອງ, ຄໍາ ກໍມີຫຼາຍ, ພະພຸດທະຮູບຂະໜາດໃຫຍ່ເຊັ່ນ: ພະອົງຕື້ເຮັດດ້ວຍທອງສໍາລິດທີ່ມີນໍ້າໜັກຫຼາຍໂຕນ, ພະເສີມ, ພະໄສ, ພະແກ້ວມໍລະກົດ ແລະ ອື່ນໆ ລ້ວນແຕ່ແມ່ນວັດຖຸບູຮານຂອງຄົນລາວທັງສິ້ນ.

ລວມຄວາມວ່າ: ວັດທະນະທໍາລາວໃນສະໄໝບູຮານນັ້ນເວົ້າລວມເວົ້າສະເພາະແມ່ນສະໄໝສັກດີນາໄດ້ຂະຫຍາຍຕົວຢ່າງຫຼວງຫຼາຍ. ນັກວິຈິດຕະກໍາ ແລະ ນັກປະພັນບູຮານໄດ້ສ້າງ ແລະໄດ້ແຕ່ງຕັ້ງຂຶ້ນມີສິລະປະ ແລະເນື້ອໃນດີງາມ, ເຮັດໃຫ້ຜູ້ອ່ານ ແລະ ຜູ້ຟັງຕິດໃຈ ແລະ ພາກພູມໃຈ. ບັນຫານີ້ພິສູດໃຫ້ເຮົາເຫັນວ່າ: ວັດທະນະທໍາລາວ ແລະ ວັນນະຄະດີລາວກໍບໍ່ໄດ້ຕໍ່າແຕ້ມຕໍ່ປະເທດອື່ນ. ນັ້ນແມ່ນມູນເຊື້ອອັນດີງາມທີ່ປູ່ຍ່າຕານາຍຂອງພວກເຮົາໄດ້ສ້າງໄວ້. ພວກເຮົາຄວນປົກປັກຮັກສາໄວ້ໃຫ້ໝັ້ນຄົງຖາວອນ ແລະ ວັດທະນະທໍາວັນນະຄະດີດັ່ງກ່າວເປັນບົດຮຽນໃຫ້ພວກເຮົາສືບທອດເອົາມາເພື່ອຂະຫຍາຍວັດທະນະທໍາ ແລະ ວັນນະຄະດີຂອງລາວເຮົາໃນສະໄໝຕໍ່ມາ. ບູຮານສະຖານ ແລະ ບູຮານນະວັດຖຸຂອງລາວຍັງເປັນສິ່ງເອກອ້າງວ່າ: ປະຊາຊົນລາວກໍແມ່ນຊາດໜຶ່ງທີ່ອຸດົມສົມບູນຄະຕິອັນສູງສົ່ງຕໍ່ການສ້າງສາປະເທດຊາດບ້ານເມືອງໃຫ້ຮຸ່ງເຮືອງສີວິໄລ ບູຮານສະຖານ ແລະ ບູຮານວັດຖຸດັ່ງກ່າວຍັງເປັນຫຼັກຖານພິຍານວ່າ: ປະເທດລາວກໍເປັນປະເທດໜຶ່ງທີ່ຮຸ່ງເຮືອງສີວິໄລບໍ່ຕ່າງຫຍັງກັບບັນດາປະ ເທດໃນຂົງເຂດແຫ່ງນີ້ໃນລະຫວ່າງກາງ ແລະ ທ້າຍສັດຕະວັດທີ XVII.

ພວກເຮົາທັງຫຼາຍກໍຖືເປັນກຽດຢ່າງສູງທີ່ປະຊາຊົນເຮົາແຕ່ບູຮານນະການໄດ້ສ້າງບູຮານສະຖານ ແລະ ບູຮານວັດຖຸປະໄວ້ໃຫ້ລູກຫຼານທີ່ເກີດໃໝ່ໃຫຍ່ລຸ້ນໄດ້ຮູ້ໄດ້ຊົມ, ບູຮານສະຖານ ບູຮານວັດຖຸຍັງເປັນສິ່ງພິສູດໃຫ້ຊາວໂລກເຫັນວ່າ: ຊາດລາວກໍມີວັດທະນະທຳຂອງຕົນມາແຕ່ບູຮານແລ້ວ, ເຖິງວ່າຊາດລາວຈະຖືກຮຸກຮານຈາກສັດຕູພາຍນອກຫຼາຍລົບຫຼາຍຕ່າວກໍຕາມພວກເຂົາຫວັງວ່າຈະລົບລ້າງວັດທະນະທຳລາວໃຫ້ໝົດແຕ່ເຂົາເຮັດບໍ່ໄດ້ເພາະ ວ່າວັດທະນະທຳລາວໄດ້ຝັງເລິກເຂົ້າໃນຈິດໃຈຂອງຄົນລາວທຸກຊັ້ນຄົນມາແຕ່ດົນນານແລ້ວ.

ຈາກວັດທະນະທາອັນສວຍສົດງົດງາມຂອງຊາດລາວເຮົານັ້ນ ພວກເຮົາທຸກຄົນຄວນປົກປັກຮັກສາ ແລະ ຖະນຸຖະໜອມໄວ້ເພື່ອມາເຜີຍແຜ່ ແລະ ຂະຫຍາຍສິດສອນໃຫ້ລູກຫຼານຮູ້ຮັກຫອມວັດທະນະທຳຂອງຊາດຕົນຢູ່ຕະຫຼອດກາລະນາ. ເພື່ອສິດສອນ ແລະ ປຸກລະດົມນໍ້າໃຈຮັກຊາດ, ຮັກປະຊາຊົນຕື່ມ. ຢາກເຮັດໄດ້ຄືແນວນັ້ນພວກເຮົາຕ້ອງມີນໍ້າໃຈມະນະອົດທົນຕໍ່ວຽກງານການຄົ້ນຄວ້າ ແລະ ຮໍ່າຮຽນເພື່ອຕອບສະໜອງຄວາມຮຽກຮ້ອງຕ້ອງການຂອງຊາດ ແລະ ທັນກັບສະພາບການຕົວຈິງຂອງນັກສຶກສາອົບຣົມໃນສະພາບປັດຈຸບັນ (ສົມທະເພີຍ ສີວົງສັກ ແລະ ອຳໄພ ສອນທະລາ, 2019).

### III. ຂັ້ນສະຫຼຸບ

❖ **ຄູເນັ້ນຈຸດສຳຄັນຂອງບົດຮຽນ**

- ການເຊື່ອຖືພຸດທະສາສະໜາ
- ສະພາບວັດທະນະທຳ ແລະ ວັນນະຄະດີ

### IV. ວັດ ແລະປະເມີນ

- ຄູຖາມຂໍ້ຂ້ອງໃຈຂອງນັກຮຽນ (ຖ້າມີ) ຄູອະທິບາຍຄືນ
- ຄູຕັ້ງຄຳຖາມ: ແຕ່ລະຂໍ້ຂອງບົດຮຽນ
- ໃຫ້ນັກຮຽນຕອບ 1-2 ຄົນ
- ຄູສັງເກດຄຳຕອບ ແລະ ສະຫຼຸບຄືນ

### V. ຂັ້ນຕັກເຕືອນ

- ຄູແນະນານັກຮຽນອ່ານບົດຮຽນໃໝ່
- ສຶກສາແນວຄິດຂອງຜູ້ຮຽນ
- ມອບວຽກບ້ານ

**ເອກະສານອ້າງອີງ**

ສົມທະເພີຍ ສີວົງສັກ ແລະ ອຳໄພ ສອນທະລາ. (2019). ວັນນະຄະດີລ້ານຊ້າງ. ຄະນະສຶກສາສາດ ມະຫາວິທະ ຍາໄລ ສຸພານຸວົງ.

ຄະນະສຶກສາສາດ (2006). ແບບຮຽນວັນນະຄະດີລ້ານຊ້າງ 3. ມະຫາວິທະຍາໄລສຸພານຸວົງ.

ພາກວິຊາຄູພາສາລາວ-ວັນນະຄະດີ (2006). ແບບຮຽນວັນນະຄະດີອິນເດຍ. ຄະນະສຶກສາສາດ ມະຫາວິທະຍາໄລ ສຸພານຸວົງ.

ຂໍ້ມູນຕິດຕໍ່:

Email: syvongsak123@gmail.com ໂທ: +85620 98003648

ຄູສອນປະຈຳວິຊາ



ປທ.ສົມທະເພີຍ ສີວົງສັກ